# ຂອບໃຈທີ່ຖາມຂ່າວ

ຂອບໃຈເດີໝູ່ເຈົ້າ ທັງສາວ-ບ່າວຫລັກເຈັດ
ເມັດນ້ຳຕານເມືອງສວັນ ເພິ່ນຊ່າກັນລືກ້ອງ
ເຫັນຄຳກອນຂອງນ້ອງ ທັງສອງໄດ້ຖາມຂ່າວ
ວ່າຢາກຮູ້ເຣື່ອງລາວ ຊາວຫລັກເຈັດເພື່ອນພ້ອງ ສອງນ້ອງໄດ້ສົ່ງມາ

ເຖິງວ່າອ້າຍມິດງຽບ ບໍ່ແມ່ນຈາກໜີໄກ ໃດເນີ
ສ່ວນຈິດໃຈຍັງຄຶດ ຮ່ຳຄະນຶງເຖິງເຈົ້າ
ບໍ່ວ່າແລງຫລືເຊົ້າ ໄດ້ເອົາກອນເຈົ້າມາອ່ານ ຢູ່ເດ
ຕິດຕາມເບິ່ງຢູ່ບ້ານ ຟັງເລື້ອງເຣື່ອງທີ່ຂຽນ ນ້ອງເອີຍ

ບໍ່ແມ່ນອ້າຍເວົ້າພ້ຽນ ຫລືວ່າປ່ຽນຫາຄວາມ
ທຸກວັນຍັງຕິດຕາມ ອ່ານກອນຂຸມເຈົ້າ
ແຕ່ວ່າ ບໍ່ໄດ້ຂຽນມາເວົ້າ ທາງອີແມວຖາມຂ່າວ
ຂໍໂທດເດີໝູ່ເຈົ້າ ຢ່າຫາເວົ້າວ່າບໍ່ດີ ນ້ອງເອີຍ

ບາດວ່າໃນມື້ນີ້ ກໍມີແນ່ເວລາຂຽນ
ຈິ່ງໄດ້ກັບມາເຮືອນ ນັ່ງຂີດຂຽນຫາເຈົ້າ
ຄອບຄົວເຮົາທາງພີ້ ກໍສຸກຂີມ່ວນຊື່ນ ຢູ່ເດີ
ທຸກວັນຄືນໝູ່ຂ້ອຍ ພາຫລານນ້ອຍຢູ່ເຮືອນ ເຈົ້າເອີຍ

Reunion ມື້ນັ້ນ ຍັງຝັງຢູ່ໃນໃຈ ນ້ອງເອີຍ
ແມ່ນຈະຕົກໄປໃສ ຊິບໍ່ໄລລືມເຈົ້າ
ອ້າຍກໍຍັງເຄີຍເວົ້າ ຈະຈຳເອົາຊົ່ວຊີວິດ ນັ້ນເດ
ຄິດຮອດເຈົ້າທຸກມື້ ໝູ ພ້ອມພ່ຳດອນ ແທ້ໃດ

ດັ່ງນັ້ນ ຂໍໃຫ້ພອນຈາກຟ້າ ເທຖອກມາເຖິງ ພວກເຈົ້າເດີ
ຂໍປັນຍາທາງເທິງ ເຂົ້າສູ່ໃຈຂອງເຈົ້າ
ໃນເມື່ອວາຈາເວົ້າ ຂຽນກອນກໍໃຫ້ຄ່ອງ
ເພື່ອໃຫ້ພວກເພື່ອນພ້ອງ ຊິມຊ້ອຍຊື່ນໃຈ ສືບຕໍ່ເດີ

*ກະຕ່າຍໝາຍຈັນ (ອ. ທອມອ່ອນ)*